**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 2939 /ອຄ
ນະຄອນຫຼວງວຽງຈັນ, ວັນທີ 17 ພະຈິກ 2025

# ຂໍ້ຕົກລົງ
# ວ່າດ້ວຍການກວດສອບ ແລະ ຢັ້ງຢືນຄຸນລັກສະນະທາດລະລາຍ ປະເພດໄຮໂດຣຄາບອນ ແລະ ທາດເຄມີ ທີ່ນຳໃຊ້ເພື່ອຜະລິດ ແລະ ປຸງແຕ່ງ ນ້ຳມັນເຊື້ອໄຟ

- ອີງຕາມ ກົດໝາຍ ວ່າດ້ວຍມາດຕະຖານ ສະບັບເລກທີ 49/ສພຊ, ລົງວັນທີ 18 ກໍລະກົດ 2014;
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 550/ນຍ, ລົງວັນທີ 01 ກັນຍາ 2025;
- ອີງຕາມ ໜັງສືສະເໜີຂອງກົມມາດຕະຖານ ແລະ ວັດແທກ ສະບັບເລກທີ 40115/ກມວ, ລົງວັນທີ 22 ຕຸລາ 2025.

**ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ ແລະ ລະບຽບການ ກ່ຽວກັບວຽກງານກວດສອບ ແລະ ຢັ້ງຢືນຄຸນລັກສະນະທາດລະລາຍປະເພດໄຮໂດຣຄາບອນ ແລະ ທາດເຄມີ ທີ່ນຳໃຊ້ເພື່ອຜະລິດ ແລະ ປຸງແຕ່ງນ້ຳມັນເຊື້ອໄຟ ໃຫ້ຖືກຕ້ອງສອດຄ່ອງກັບກົດໝາຍ ແລະ ລະບຽບການ, ມາດຕະຖານແຫ່ງຊາດ, ພາກພື້ນ ແລະ ສາກົນ ແນໃສ່ຮັບປະກັນປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງລັດ, ຜູ້ດຳເນີນທຸລະກິດ ແລະ ຜູ້ຊົມໃຊ້ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

**ມາດຕາ 2 ການກວດສອບ ແລະ ຢັ້ງຢືນຄຸນລັກສະນະທາດລະລາຍປະເພດໄຮໂດຣຄາບອນ ແລະ ທາດເຄມີ**

ການກວດສອບ ແລະ ຢັ້ງຢືນຄຸນລັກສະນະທາດລະລາຍປະເພດໄຮໂດຣຄາບອນ ແລະ ທາດເຄມີ ແມ່ນການຄຸ້ມຄອງ, ຕິດຕາມ ແລະ ກວດສອບທາງດ້ານເຕັກນິກ ເພື່ອດຳເນີນການທົດສອບ ແລະ ຢັ້ງຢືນຄຸນລັກສະນະທາດລະລາຍປະເພດໄຮໂດຣຄາບອນ ແລະ ທາດເຄມີ ທີ່ນຳໃຊ້ເພື່ອຜະລິດ ແລະ ປຸງແຕ່ງນ້ຳມັນເຊື້ອໄຟ.

**ມາດຕາ 3 ອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ທາດລະລາຍປະເພດໄຮໂດຣຄາບອນ (Hydrocarbon Solvent)** ໝາຍເຖິງ ຜະລິດຕະພັນປິໂຕຣເຄມີ ທີ່ໄດ້ຈາກການກັ່ນປິໂຕຣລຽມປະເພດໃດໜຶ່ງ ມີຄຸນລັກສະນະຄ້າຍນ້ຳມັນກ໊າສ ແລະ ນ້ຳມັນແອັດຊັງ;
2. **ການຢັ້ງຢືນຄຸນລັກສະນະທາດລະລາຍປະເພດໄຮໂດຣຄາບອນ ແລະ ທາດເຄມີ** ໝາຍເຖິງ ການຢັ້ງຢືນຕົວຕົນ ແລະ ຄຸນສົມບັດສະເພາະຂອງຜະລິດຕະພັນໃດໜຶ່ງ ເພື່ອໃຫ້ຖືກຕ້ອງຕາມມາດຕະຖານແຫ່ງຊາດ, ພາກພື້ນ ແລະ ສາກົນ.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ດຳເນີນທຸລະກິດຜະລິດ, ປຸງແຕ່ງ, ຈຳໜ່າຍ, ນຳເຂົ້າ ແລະ ສົ່ງອອກ ທາດລະລາຍປະເພດໄຮໂດຣຄາບອນ ແລະ ທາດເຄມີ ທີ່ນຳໃຊ້ເພື່ອຜະລິດ ແລະ ປຸງແຕ່ງນ້ຳມັນເຊື້ອໄຟ ຢູ່ ສປປ ລາວ.

## ໝວດທີ 2
## ປະເພດ, ສະຫຼາກ ແລະ ເຄື່ອງໝາຍ ທີ່ໃຊ້ໃນພາຊະນະບັນຈຸ

**ມາດຕາ 5 ປະເພດຂອງທາດລະລາຍປະເພດໄຮໂດຣຄາບອນ ແລະ ທາດເຄມີ**

ທາດລະລາຍປະເພດໄຮໂດຣຄາບອນ ແລະ ທາດເຄມີ ມີປະເພດ ດັ່ງນີ້:

1. ທາດລະລາຍປະເພດໄຮໂດຣຄາບອນ ທີ່ນຳໃຊ້ເພື່ອຜະລິດ ແລະ ປຸງແຕ່ງນ້ຳມັນເຊື້ອໄຟ ມີຄື:
   1) ແນັບທາ (Naphtha);
   2) ດີໄລອອຍ (Dei Light Oil);
   3) ເອຈີໂອ (Automotive Gas Oil-AGO);
   4) ຄອນເດັນເສດ (Condensate);
   5) ທາດລະລາຍທີ່ມີຈຸດຟົດສຸດທ້າຍ (Final Boiling Point) ບໍ່ເກີນກວ່າ 400°C.

2. ທາດເຄມີ ທີ່ນຳໃຊ້ເພື່ອຜະລິດ ແລະ ປຸງແຕ່ງນ້ຳມັນເຊື້ອໄຟ ມີຄື:
   1) ເພນເທນ (Pentane);
   2) ເຮກເຊນ (Hexane);
   3) ເບນຊີນ (Benzene);
   4) ໂທລູອີນ (Toluene);
   5) ອໍໂຮໄຊລີນ (O-Xylene);
   6) ພາລາໄຊລີນ (P-Xylene);
   7) ເມຕາໄຊລີນ (M-Xylene);
   8) ມິກໄຊລີນ (Mixed-Xylene);
   9) ທາດເອັມທີບີອີ (Methy Teriary Butyl Ether);
   10) ເອທານອນ (Ethanol);
   11) ເມທານອນ (Methanol);
   12) ຊີໄນອາໂຣມາຕິກ (C9+ Aromatic).

**ມາດຕາ 6 ສະຫຼາກ ແລະ ເຄື່ອງໝາຍ ທີ່ໃຊ້ໃນພາຊະນະບັນຈຸ**

ສະຫຼາກ ແລະ ເຄື່ອງໝາຍ ທີ່ໃຊ້ໃນພາຊະນະບັນຈຸ ຕ້ອງສອດຄ່ອງຕາມທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍການຄຸ້ມຄອງເຄມີ ສະບັບເລກທີ 07/ສພຊ, ລົງວັນທີ 10 ພະຈິກ 2016, ຂໍ້ຕົກລົງ ວ່າດ້ວຍສະຫຼາກເຄມີ ສະບັບເລກທີ 0863/ອຄ.ກອທ, ລົງວັນທີ 15 ກັນຍາ 2021 ແລະ ໃຫ້ສອດຄ່ອງກັບການຈຳແນກປະເພດ ແລະ ການຕິດສະຫຼາກເຄມີ ທີ່ເປັນລະບົບດຽວກັນທົ່ວໂລກ Globally Harmonized System of Classification and Labelling of Chemicals (GHS).

ສຳລັບສະຫຼາກ ແລະ ເຄື່ອງໝາຍ ທີ່ເປັນພາສາຕ່າງປະເທດ ຕ້ອງໄດ້ຮັບການແປ ແລະ ມີເນື້ອໃນສອດຄ່ອງກັບພາສາລາວ, ຍົກເວັ້ນພາຊະນະບັນຈຸນ້ຳມັນເຊື້ອໄຟ ທີ່ຢູ່ໃຕ້ດິນ.

## ໝວດທີ 3
## ການສະເໜີຂໍກວດສອບ ແລະ ຢັ້ງຢືນຄຸນລັກສະນະທາດລະລາຍ ປະເພດໄຮໂດຣຄາບອນ ແລະ ທາດເຄມີ

**ມາດຕາ 7 ການສະເໜີຂໍກວດສອບ ແລະ ຢັ້ງຢືນຄຸນລັກສະນະທາດລະລາຍປະເພດໄຮໂດຣຄາບອນ ແລະ ທາດເຄມີ**

ການສະເໜີຂໍກວດສອບ ແລະ ຢັ້ງຢືນຄຸນລັກສະນະທາດລະລາຍປະເພດໄຮໂດຣຄາບອນ ແລະ ທາດເຄມີ ຕ້ອງປະຕິບັດ ດັ່ງນີ້:

1. ທາດລະລາຍປະເພດໄຮໂດຣຄາບອນ ແລະ ທາດເຄມີ ທີ່ຜະລິດ, ປຸງແຕ່ງ ແລະ ຈຳໜ່າຍ ໃຫ້ຍື່ນຄຳຮ້ອງຕໍ່ກົມມາດຕະຖານ ແລະ ວັດແທກ ຕ້ອງປະກອບເອກະສານ ດັ່ງນີ້:
   1) ຄຳຮ້ອງ ຕາມແບບພິມຂອງກົມມາດຕະຖານ ແລະ ວັດແທກ;
   2) ສຳເນົາໃບຢັ້ງຢືນດຳເນີນກິດຈະການໂຮງງານ;
   3) ສຳເນົາໃບອະນຸຍາດນຳເຂົ້າທາດລະລາຍປະເພດໄຮໂດຣຄາບອນ ແລະ ທາດເຄມີ ຂອງຂະແໜງການອຸດສາຫະກຳ ແລະ ການຄ້າ;
   4) ສຳເນົາໃບຢັ້ງຢືນແຜນຄວາມຕ້ອງການ ປະຈຳປີ ແລະ ແຜນການຜະລິດ ທີ່ໄດ້ຜ່ານການຮັບຮອງຈາກກົມອຸດສາຫະກຳປຸງແຕ່ງ.

2. ທາດລະລາຍປະເພດໄຮໂດຣຄາບອນ ແລະ ທາດເຄມີ ທີ່ນຳເຂົ້າ ແລະ ສົ່ງອອກ ໃຫ້ຍື່ນຄຳຮ້ອງຕໍ່ຂະແໜງກວດສອບຄຸນນະພາບຜະລິດຕະພັນ-ສິນຄ້າ ປະຈຳດ່ານເຂົ້າ-ອອກ ຕ້ອງປະກອບເອກະສານ ດັ່ງນີ້:
   1) ຄຳຮ້ອງ ຕາມແບບພິມກົມມາດຕະຖານ ແລະ ວັດແທກ;
   2) ສຳເນົາໃບອະນຸຍາດນຳເຂົ້າທາດລະລາຍປະເພດໄຮໂດຣຄາບອນ ແລະ ທາດເຄມີ ຂອງຂະແໜງການອຸດສາຫະກຳ ແລະ ການຄ້າ;
   3) ສຳເນົາໃບຢັ້ງຢືນແຜນຄວາມຕ້ອງການ ປະຈຳປີ ແລະ ແຜນການຜະລິດ ທີ່ໄດ້ຜ່ານການຮັບຮອງຈາກກົມອຸດສາຫະກຳປຸງແຕ່ງ;
   4) ສຳເນົາໃບຢັ້ງຢືນຄຸນນະພາບຈາກຕົ້ນທາງ (ບໍ່ເກີນ ຫົກເດືອນ ນັບແຕ່ວັນອອກໃບຢັ້ງຢືນ);
   5) ສຳເນົາໃບຢັ້ງຢືນບໍລິມາດລົດບັນທຸກ;
   6) ສຳເນົາໃບແຈ້ງລາຄາ.

**ມາດຕາ 8 ການພິຈາລະນາອອກໃບຢັ້ງຢືນຄຸນລັກສະນະທາດລະລາຍປະເພດໄຮໂດຣຄາບອນ ແລະ ທາດເຄມີ**

ພາຍຫຼັງໄດ້ຮັບເອກະສານຖືກຕ້ອງ ແລະ ຄົບຖ້ວນ ຕາມທີ່ກຳນົດໄວ້ໃນມາດຕາ 7 ຂອງຂໍ້ຕົກລົງສະບັບນີ້ ກົມມາດຕະຖານ ແລະ ວັດແທກ ຫຼື ຂະແໜງກວດສອບຄຸນນະພາບຜະລິດຕະພັນ-ສິນຄ້າ ປະຈຳດ່ານເຂົ້າ-ອອກ ຕ້ອງດຳເນີນການກວດສອບຄຸນລັກສະນະທາດລະລາຍປະເພດໄຮໂດຣຄາບອນ ແລະ ທາດເຄມີ ທີ່ນຳໃຊ້ເພື່ອຜະລິດ ແລະ ປຸງແຕ່ງນ້ຳມັນເຊື້ອໄຟ ຕາມຮູບແບບ ແລະ ຫຼັກການກວດສອບ ຕາມທີ່ກຳນົດໄວ້ໃນມາດຕາ 10 ແລະ 11 ຂອງຂໍ້ຕົກລົງສະບັບນີ້.

ການພິຈາລະນາອອກໃບຢັ້ງຢືນຄຸນລັກສະນະທາດລະລາຍປະເພດໄຮໂດຣຄາບອນ ແລະ ທາດເຄມີ ທີ່ຜະລິດ, ປຸງແຕ່ງ ແລະ ຈຳໜ່າຍ ພາຍໃນ ສິບວັນ ລັດຖະການ ນັບແຕ່ວັນໄດ້ຮັບເອກະສານເປັນຕົ້ນໄປ.

ສຳລັບການອອກໃບຢັ້ງຢືນຄຸນລັກສະນະທາດລະລາຍປະເພດໄຮໂດຣຄາບອນ ແລະ ທາດເຄມີ ທີ່ນຳເຂົ້າ ແລະ ສົ່ງອອກ ຢູ່ດ່ານເຂົ້າ-ອອກ ພາຍໃນ ໜຶ່ງວັນ ລັດຖະການ ນັບແຕ່ວັນໄດ້ຮັບເອກະສານເປັນຕົ້ນໄປ.

**ມາດຕາ 9 ອາຍຸໃບຢັ້ງຢືນຄຸນລັກສະນະທາດລະລາຍປະເພດໄຮໂດຣຄາບອນ ແລະ ທາດເຄມີ**

ໃບຢັ້ງຢືນຄຸນລັກສະນະທາດລະລາຍປະເພດໄຮໂດຣຄາບອນ ແລະ ທາດເຄມີ ທີ່ນໍາໃຊ້ເພື່ອຜະລິດ ແລະ ປຸງແຕ່ງນໍ້າມັນເຊື້ອໄຟ ແມ່ນຈະອອກໃຫ້ພຽງຄັ້ງດຽວ ຊຶ່ງບໍ່ມີອາຍຸການໃຊ້ງານ.

## ໝວດທີ 4
## ຮູບແບບ ແລະ ຫຼັກການກວດສອບ

**ມາດຕາ 10 ຮູບແບບການກວດສອບ**

ການກວດສອບຄຸນລັກສະນະທາດລະລາຍປະເພດໄຮໂດຣຄາບອນ ແລະ ທາດເຄມີ ມີຮູບແບບ ດັ່ງນີ້:

1. ກວດສອບຕາມການສະເໜີ;
2. ກວດສອບຕາມແຜນປົກກະຕິ ໜຶ່ງ ເດືອນຕໍ່ຄັ້ງ;
3. ກວດສອບແບບກະທັນຫັນ (ສຸກເສີນ) ຊຶ່ງຈະບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດສອບຮູ້ລ່ວງໜ້າ.

**ມາດຕາ 11 ຫຼັກການກວດສອບ**

ການກວດສອບຄຸນລັກສະນະສອບທາດລະລາຍປະເພດໄຮໂດຣຄາບອນ ແລະ ທາດເຄມີ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ການກວດສອບຄຸນລັກສະນະທຸກຄັ້ງ ຕ້ອງມີບັດເຈົ້າໜ້າທີ່ ຫຼື ພະນັກງານ ຊຶ່ງອອກໂດຍກົມມາດຕະຖານ ແລະ ວັດແທກ ຫຼື ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ ຕາມການມອບໝາຍ;

2. ການກວດສອບຄຸນລັກສະນະທາດລະລາຍປະເພດໄຮໂດຣຄາບອນ ແລະ ທາດເຄມີ ທີ່ຜະລິດ, ປຸງແຕ່ງ ແລະ ຈໍາໜ່າຍ, ຖ້າຫາກວ່າຜົນການກວດສອບຖືກຕ້ອງສອດຄ່ອງຕາມມາດຕະຖານແຫ່ງຊາດ, ພາກພື້ນ ແລະ ສາກົນ, ພະນັກງານທີ່ກ່ຽວຂ້ອງ ຕ້ອງໄດ້ອອກໃບຢັ້ງຢືນຄຸນລັກສະນະທາດລະລາຍປະເພດໄຮໂດຣຄາບອນ ແລະ ທາດເຄມີ ເພື່ອຢັ້ງຢືນຄວາມຖືກຕ້ອງ ແລະ ໜີບກົ່ວ ເພື່ອປ້ອງກັນການລັກລອບຈໍາໜ່າຍ ໃນລະຫວ່າງການຂົນສົ່ງ;

3. ການກວດສອບຄຸນລັກສະນະທາດລະລາຍປະເພດໄຮໂດຣຄາບອນ ແລະ ທາດເຄມີ ທີ່ຈະນໍາເຂົ້າ ແລະ ສົ່ງອອກ ຫາກຜົນການກວດສອບບໍ່ສອດຄ່ອງຕາມມາດຕະຖານແຫ່ງຊາດ, ພາກພື້ນ ແລະ ສາກົນ, ເຈົ້າໜ້າທີ່ ຫຼື ພະນັກງານກ່ຽວຂ້ອງ ຕ້ອງໄດ້ເຮັດບົດບັນທຶກ ແລະ ສັ່ງໂຈະການນໍາເຂົ້າ ແລະ ສົ່ງອອກຊົ່ວຄາວ ເພື່ອລາຍງານຂັ້ນເທິງ ແລະ ພາກສ່ວນກ່ຽວຂ້ອງຮັບຊາບ;

4. ສໍາລັບທາດລະລາຍປະເພດໄຮໂດຣຄາບອນ ແລະ ທາດເຄມີ ທີ່ຜະລິດ, ປຸງແຕ່ງ ແລະ ຈໍາໜ່າຍ ຫາກຜົນການກວດສອບບໍ່ສອດຄ່ອງຕາມມາດຕະຖານແຫ່ງຊາດ, ພາກພື້ນ ແລະ ສາກົນ ເຈົ້າໜ້າທີ່ ຫຼື ພະນັກງານກ່ຽວຂ້ອງ ຕ້ອງໄດ້ເຮັດບົດບັນທຶກ ແລະ ຈະບໍ່ອອກໃບຢັ້ງຢືນຄຸນລັກສະນະຂອງທາດດັ່ງກ່າວ ຈົນກວ່າຈະປັບປຸງຄຸນລັກສະນະ ຖືກຕ້ອງສອດຄ່ອງຕາມມາດຕະຖານແຫ່ງຊາດ, ພາກພື້ນ ແລະ ສາກົນ.

## ໝວດທີ 5
## ສິດ ແລະ ພັນທະ ຂອງຜູ້ດໍາເນີນທຸລະກິດ

**ມາດຕາ 12 ສິດຂອງຜູ້ດໍາເນີນທຸລະກິດ**

ຜູ້ດໍາເນີນທຸລະກິດກ່ຽວຂ້ອງກັບທາດລະລາຍປະເພດໄຮໂດຣຄາບອນ ແລະ ທາດເຄມີ ທີ່ນໍາໃຊ້ເພື່ອຜະລິດ ແລະ ປຸງແຕ່ງນໍ້າມັນເຊື້ອໄຟ ມີສິດ ດັ່ງນີ້:

1. ບໍລິການ, ໂຄສະນາເຜີຍແຜ່ຄຸນນະພາບ ໃຫ້ຖືກຕ້ອງຕາມຄວາມເປັນຈິງ ພາຍຫຼັງໄດ້ຮັບການກວດສອບ ແລະ ຢັ້ງຢືນຄຸນລັກສະນະທາດລະລາຍປະເພດໄຮໂດຣຄາບອນ ແລະ ທາດເຄມີ;
2. ປົກປ້ອງສິດ ແລະ ຜົນປະໂຫຍດ ກ່ຽວກັບການດໍາເນີນທຸລະກິດຂອງຕົນ;

3. ຮ້ອງຂໍຄວາມເປັນທຳ ຕໍ່ອົງການຄຸ້ມຄອງລັດກ່ຽວຂ້ອງ ຫາກເຫັນວ່າການກວດສອບ ແລະ ຢັ້ງຢືນຄຸນລັກສະນະທາດລະລາຍປະເພດໄຮໂດຣຄາບອນ ແລະ ທາດເຄມີ ບໍ່ໄດ້ຮັບຄວາມເປັນທຳ;

4. ສະເໜີຕໍ່ກົມມາດຕະຖານ ແລະ ວັດແທກ ຫຼື ຂະແໜງກວດສອບຄຸນນະພາບຜະລິດຕະພັນ-ສິນຄ້າ ປະຈຳດ່ານເຂົ້າ-ອອກ ເພື່ອກວດສອບຄຸນລັກສະນະທາດລະລາຍປະເພດໄຮໂດຣຄາບອນ ແລະ ທາດເຄມີ;

5. ນຳໃຊ້ສິດອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 13 ພັນທະຜູ້ດຳເນີນທຸລະກິດ**

ຜູ້ດຳເນີນທຸລະກິດກ່ຽວຂ້ອງກັບທາດລະລາຍປະເພດໄຮໂດຣຄາບອນ ແລະ ທາດເຄມີ ທີ່ນຳໃຊ້ເພື່ອຜະລິດ ແລະ ປຸງແຕ່ງນ້ຳມັນເຊື້ອໄຟ ມີພັນທະ ດັ່ງນີ້:

1. ການຜະລິດ, ປຸງແຕ່ງ, ຈຳໜ່າຍ, ນຳເຂົ້າ ແລະ ສົ່ງອອກ ທາດລະລາຍປະເພດໄຮໂດຣຄາບອນ ແລະ ທາດເຄມີ ຕ້ອງໄດ້ຮັບການກວດສອບ ແລະ ຢັ້ງຢືນຄຸນລັກສະນະ ໃຫ້ຖືກຕ້ອງຕາມມາດຕະຖານແຫ່ງຊາດ, ພາກພື້ນ ແລະ ສາກົນ;

2. ຮັບຜິດຊອບຕໍ່ຜົນເສຍຫາຍທີ່ເກີດຂຶ້ນຍ້ອນຄຸນລັກສະນະ ແລະ ປະລິມານຂອງທາດລະລາຍປະເພດໄຮໂດຣຄາບອນ ແລະ ທາດເຄມີ ບໍ່ຖືກຕ້ອງຕາມມາດຕະຖານແຫ່ງຊາດ, ພາກພື້ນ ແລະ ສາກົນ;

3. ສະໜອງເອກະສານກ່ຽວຂ້ອງໃຫ້ຄົບຖ້ວນ ກ່ຽວກັບການສະເໜີຂໍກວດສອບ ແລະ ຢັ້ງຢືນຄຸນລັກສະນະທາດລະລາຍປະເພດໄຮໂດຣຄາບອນ ແລະ ທາດເຄມີ;

4. ຈ່າຍຄ່າທຳນຽມ ແລະ ຄ່າບໍລິການ ການກວດສອບ ແລະ ຢັ້ງຢືນຄຸນລັກສະນະທາດລະລາຍປະເພດໄຮໂດຣຄາບອນ ແລະ ທາດເຄມີ;

5. ໃຫ້ຄວາມຮ່ວມມື ແລະ ອຳນວຍຄວາມສະດວກ ໃຫ້ແກ່ເຈົ້າໜ້າທີ່ ຫຼື ພະນັກງານ ໄປກວດສອບຄຸນລັກສະນະທາດລະລາຍປະເພດໄຮໂດຣຄາບອນ ແລະ ທາດເຄມີ ໃນແຕ່ລະຄັ້ງ;

6. ປະຕິບັດພັນທະອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 6
## ຂໍ້ຫ້າມ

**ມາດຕາ 14 ຂໍ້ຫ້າມທົ່ວໄປ**

ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ດຳເນີນທຸລະກິດ ກ່ຽວກັບທາດລະລາຍປະເພດໄຮໂດຣຄາບອນ ແລະ ທາດເຄມີ ທີ່ບໍ່ໄດ້ຜ່ານການກວດສອບ ແລະ ຢັ້ງຢືນຄຸນລັກສະນະ ໂດຍບໍ່ໄດ້ຮັບອະນຸຍາດ;

2. ສ້າງອຸປະສັກ, ຂັດຂວາງ ຫຼື ບໍ່ໃຫ້ການຮ່ວມມືແກ່ເຈົ້າໜ້າທີ່ ຫຼື ພະນັກງານ ໃນການໄປກວດສອບຄຸນລັກສະນະທາດລະລາຍປະເພດໄຮໂດຣຄາບອນ ແລະ ທາດເຄມີ;

3. ປອມແປງເອກະສານ ຫຼື ນຳໃຊ້ເອກະສານປອມ ກ່ຽວກັບການກວດສອບຄຸນລັກສະນະທາດລະລາຍປະເພດໄຮໂດຣຄາບອນ ແລະ ທາດເຄມີ;

4. ໃຫ້, ເປັນສື່ກາງໃນການໃຫ້ ຫຼື ຮັບ ສິນບົນ;

5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 15 ຂໍ້ຫ້າມສຳລັບຜູ້ດຳເນີນທຸລະກິດ**

ຫ້າມຜູ້ດຳເນີນທຸລະກິດ ມີພຶດຕິກຳ ດັ່ງນີ້:

1. ຜະລິດ, ປຸງແຕ່ງ, ຈຳໜ່າຍ, ນຳເຂົ້າ ແລະ ສົ່ງອອກ ທາດລະລາຍປະເພດໄຮໂດຣຄາບອນ ແລະ ທາດເຄມີ ທີ່ບໍ່ໄດ້ຄຸນນະພາບ, ບໍ່ໄດ້ຮັບການກວດສອບ ແລະ ຢັ້ງຢືນຄຸນລັກສະນະ;

2. ຕັດກົ໊ວ ໂດຍບໍ່ໄດ້ຮັບອະນຸຍາດ ເພື່ອລັກລອບຈຳໜ່າຍທາດລະລາຍປະເພດໄຮໂດຣຄາບອນ ແລະ ທາດເຄມີ ໃນລະຫວ່າງການຂົນສົ່ງ.

3. ສ້າງອຸປະສັກກີດຂວາງ ການປະຕິບັດໜ້າທີ່ຂອງເຈົ້າໜ້າທີ່ ຫຼື ພະນັກງານ ໄປກວດສອບຄຸນລັກສະນະທາດລະລາຍປະເພດໄຮໂດຣຄາບອນ ແລະ ທາດເຄມີ;

4. ໃຫ້ສິນບົນ ແລະ ສົມຮູ້ຮ່ວມຄິດກັບເຈົ້າໜ້າທີ່ ຫຼື ພະນັກງານ ໄປກວດສອບຄຸນລັກສະນະທາດລະລາຍປະເພດໄຮໂດຣຄາບອນ ແລະ ທາດເຄມີ;

5. ປອມແປງເອກະສານ ຫຼື ນໍາໃຊ້ເອກະສານປອມ ກ່ຽວກັບການຢັ້ງຢືນຄຸນລັກສະນະທາດລະລາຍປະເພດໄຮໂດຣຄາບອນ ແລະ ທາດເຄມີ;

6. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 16 ຂໍ້ຫ້າມສໍາລັບເຈົ້າໜ້າທີ່ ແລະ ພະນັກງານ**

ຫ້າມເຈົ້າໜ້າທີ່ ແລະ ພະນັກງານ ມີພຶດຕິກໍາ ດັ່ງນີ້:

1. ຜູ້ສວຍໃຊ້ ໜ້າທີ່, ຕໍາແໜ່ງ ເພື່ອຜົນປະໂຫຍດສ່ວນຕົວ, ຍາດພີ່ນ້ອງ ແລະ ພັກພວກ ຂອງຕົນ;

2. ກົດໜ່ວງ, ຖ່ວງດຶງ ຫຼື ແກ່ຍາວເວລາ ໃນການພິຈາລະນາເອກະສານ;

3. ເປີດເຜີຍຂໍ້ມູນທີ່ເປັນຄວາມລັບ ກ່ຽວກັບການດໍາເນີນທຸລະກິດ ກ່ຽວກັບທາດລະລາຍປະເພດໄຮໂດຣຄາບອນ ແລະ ທາດເຄມີ ໂດຍບໍ່ໄດ້ຮັບອະນຸຍາດ;

5. ອອກໃບຢັ້ງຢືນຄຸນລັກສະນະທາດລະລາຍປະເພດໄຮໂດຣຄາບອນ ແລະ ທາດເຄມີ ໂດຍບໍ່ຖືກຕ້ອງສອດຄ່ອງຕາມມາດຕະຖານແຫ່ງຊາດ, ພາກພື້ນ ແລະ ສາກົນ.

4. ຮຽກເອົາ, ທວງເອົາ ຫຼື ຮັບເອົາ ສິນບົນ ຈາກຜູ້ດໍາເນີນທຸລະກິດ;

5. ເປັນນາຍໜ້າ, ທີ່ປຶກສາ ໃຫ້ແກ່ຜູ້ດໍາເນີນທຸລະກິດ ກ່ຽວກັບທາດລະລາຍປະເພດໄຮໂດຣຄາບອນ ແລະ ທາດເຄມີ;

6. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ໝວດທີ 7
## ການຈັດຕັ້ງປະຕິບັດວຽກງານກວດສອບ ແລະ ຢັ້ງຢືນຄຸນລັກສະນະທາດລະລາຍປະເພດໄຮໂດຣຄາບອນ ແລະ ທາດເຄມີ

**ມາດຕາ 17 ການຈັດຕັ້ງປະຕິບັດວຽກງານກວດສອບ ແລະ ຢັ້ງຢືນຄຸນລັກສະນະ**

ການຈັດຕັ້ງປະຕິບັດວຽກງານກວດສອບ ແລະ ຢັ້ງຢືນຄຸນລັກສະນະທາດລະລາຍປະເພດໄຮໂດຣຄາບອນ ແລະ ທາດເຄມີ ທີ່ນໍາໃຊ້ເພື່ອຜະລິດ ແລະ ປຸງແຕ່ງນໍ້າມັນເຊື້ອໄຟ ຂອງຂະແໜງການອຸດສາຫະກໍາ ແລະ ການຄ້າ ປະກອບມີ ດັ່ງນີ້:

1. ກົມມາດຕະຖານ ແລະ ວັດແທກ;
2. ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ;
3. ຂະແໜງກວດສອບຄຸນນະພາບຜະລິດຕະພັນ-ສິນຄ້າ ປະຈໍາດ່ານເຂົ້າ-ອອກ.

**ມາດຕາ 18 ສິດ ແລະ ໜ້າທີ່ ຂອງກົມມາດຕະຖານ ແລະ ວັດແທກ**

ກົມມາດຕະຖານ ແລະ ວັດແທກ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າສ້າງ ແລະ ປັບປຸງກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານກວດສອບ ແລະ ຢັ້ງຢືນຄຸນລັກສະນະທາດລະລາຍປະເພດໄຮໂດຣຄາບອນ ແລະ ທາດເຄມີ ເພື່ອນໍາສະເໜີຂັ້ນເທິງພິຈາລະນາ;

2. ເຜີຍແຜ່, ແນະນໍາ ຂໍ້ຕົກລົງສະບັບນີ້ ພ້ອມດ້ວຍກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານກວດສອບ ແລະ ຢັ້ງຢືນຄຸນລັກສະນະທາດລະລາຍປະເພດໄຮໂດຣຄາບອນ ແລະ ທາດເຄມີ ໃຫ້ສັງຄົມຮັບຊາບຢ່າງທົ່ວເຖິງ;

3. ເກັບຕົວຢ່າງທາດລະລາຍປະເພດໄຮໂດຣຄາບອນ ແລະ ທາດເຄມີ ໄປກວດສອບຄຸນລັກສະນະ ເພື່ອໃຫ້ສອດຄ່ອງຕາມມາດຕະຖານແຫ່ງຊາດ, ພາກພື້ນ ແລະ ສາກົນ;

4. ໜີບກົ່ວຝາປິດເປີດຖັງ ແລະ ທໍ່ວປິດເປີດວາວ ຢູ່ລົດບັນທຸກທາດລະລາຍປະເພດໄຮໂດຣຄາບອນ ແລະ ທາດເຄມີ ໃຫ້ຖືກຕ້ອງຕາມລະບຽບການເຕັກນິກ;

5. ອອກໃບຢັ້ງຢືນຄຸນລັກສະນະທາດລະລາຍປະເພດໄຮໂດຣຄາບອນ ແລະ ທາດເຄມີ ທີ່ຜະລິດ, ປຸງແຕ່ງ ແລະ ຈໍາໜ່າຍ;

6. ໂຈະຊົ່ວຄາວ ການນໍາເຂົ້າ ແລະ ສົ່ງອອກ ທາດລະລາຍປະເພດໄຮໂດຣຄາບອນ ແລະ ທາດເຄມີ ທີ່ບໍ່ສອດຄ່ອງຕາມມາດຕະຖານແຫ່ງຊາດ, ພາກພື້ນ ແລະ ສາກົນ ພາຍຫຼັງໄດ້ຮັບການລາຍງານຈາກຂະແໜງກວດສອບຄຸນນະພາບຜະລິດຕະພັນ-ສິນຄ້າ ປະຈໍາດ່ານເຂົ້າ-ອອກ ເພື່ອລາຍງານຂໍທິດຊີ້ນໍາຄະນະນໍາກະຊວງພິຈາລະນາແກ້ໄຂ;

7. ເກັບຄ່າທໍານຽມ ແລະ ຄ່າບໍລິການ ກວດສອບ ແລະ ອອກໃບຢັ້ງຢືນຄຸນລັກສະນະທາດລະລາຍປະເພດໄຮໂດຣຄາບອນ ແລະ ທາດເຄມີ;

8. ກວດສອບຄຸນລັກສະນະທາດລະລາຍປະເພດໄຮໂດຣຄາບອນ ແລະ ທາດເຄມີ ຕາມແຜນປົກກະຕິເດືອນລະຄັ້ງ ຫຼື ກວດແບບສຸກເສີນ;

9. ແນະນໍາຜູ້ຜະລິດ, ປຸງແຕ່ງ, ຈໍາໜ່າຍ, ນໍາເຂົ້າ ແລະ ສົ່ງອອກ ທາດລະລາຍປະເພດໄຮໂດຣຄາບອນ ແລະ ທາດເຄມີ ກ່ຽວກັບຂັ້ນຕອນການສະເໜີຂໍກວດສອບ ແລະ ຢັ້ງຢືນຄຸນລັກສະນະທາດລະລາຍປະເພດໄຮໂດຣຄາບອນ ແລະ ທາດເຄມີ;

10. ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ກ່ຽວກັບວຽກງານກວດສອບຄຸນລັກສະນະທາດລະລາຍປະເພດໄຮໂດຣຄາບອນ ແລະ ທາດເຄມີ ໃຫ້ສອດຄ່ອງຕາມມາດຕະຖານແຫ່ງຊາດ, ພາກພື້ນ ແລະ ສາກົນ;

11. ປັບໃໝ ແລະ ນໍາໃຊ້ມາດຕະການຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານມາດຕະຖານ;

12. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານກວດສອບ ແລະ ຢັ້ງຢືນຄຸນລັກສະນະທາດລະລາຍປະເພດໄຮໂດຣຄາບອນ ແລະ ທາດເຄມີ ໃຫ້ຂັ້ນເທິງຮັບຊາບ;

13. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 19 ສິດ ແລະ ໜ້າທີ່ ຂອງພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ**

ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເຜີຍແຜ່, ແນະນໍາ ຂໍ້ຕົກລົງສະບັບນີ້ ພ້ອມດ້ວຍກົດໝາຍ ແລະ ລະບຽບການ, ຂໍ້ມູນຂ່າວສານ ກ່ຽວກັບວຽກງານກວດສອບ ແລະ ຢັ້ງຢືນຄຸນລັກສະນະທາດລະລາຍປະເພດໄຮໂດຣຄາບອນ ແລະ ທາດເຄມີ ໃຫ້ສັງຄົມຮັບຊາບຢ່າງທົ່ວເຖິງ;

2. ປະສານສົມທົບກັບກົມມາດຕະຖານ ແລະ ວັດແທກ ແລະ ພາກສ່ວນກ່ຽວຂ້ອງ ກ່ຽວກັບວຽກງານກວດສອບ ແລະ ຢັ້ງຢືນຄຸນລັກສະນະທາດລະລາຍປະເພດໄຮໂດຣຄາບອນ ແລະ ທາດເຄມີ;

3. ຕິດຕາມ, ກວດກາ ແລະ ສະໜອງຂໍ້ມູນ ກ່ຽວກັບວຽກງານກວດສອບ ແລະ ຢັ້ງຢືນຄຸນລັກສະນະທາດລະລາຍປະເພດໄຮໂດຣຄາບອນ ແລະ ທາດເຄມີ;

4. ປັບໃໝ ແລະ ນໍາໃຊ້ມາດຕະການຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານມາດຕະຖານ ຕາມການແບ່ງຂັ້ນຄຸ້ມຄອງ;

5. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານກວດສອບ ແລະ ຢັ້ງຢືນຄຸນລັກສະນະທາດລະລາຍປະເພດໄຮໂດຣຄາບອນ ແລະ ທາດເຄມີ ໃຫ້ກົມມາດຕະຖານ ແລະ ວັດແທກ ແລະ ພາກສ່ວນກ່ຽວຂ້ອງຮັບຊາບຢ່າງເປັນປົກກະຕິ;

6. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 20 ສິດ ແລະ ໜ້າທີ່ ຂອງຂະແໜງກວດສອບຄຸນນະພາບຜະລິດຕະພັນ-ສິນຄ້າ ປະຈຳດ່ານເຂົ້າ-ອອກ**

ຂະແໜງກວດສອບຄຸນນະພາບຜະລິດຕະພັນ-ສິນຄ້າ ປະຈຳດ່ານເຂົ້າ-ອອກ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເຜີຍແຜ່, ແນະນຳ ຂໍ້ຕົກລົງສະບັບນີ້ ພ້ອມດ້ວຍກົດໝາຍ ແລະ ລະບຽບການ, ຂໍ້ມູນຂ່າວສານ ກ່ຽວກັບວຽກງານກວດສອບ ແລະ ຢັ້ງຢືນຄຸນລັກສະນະທາດລະລາຍປະເພດໄຮໂດຣຄາບອນ ແລະ ທາດເຄມີ ໃຫ້ສັງຄົມຮັບຊາບຢ່າງທົ່ວເຖິງ;
2. ເກັບຕົວຢ່າງທາດລະລາຍປະເພດໄຮໂດຣຄາບອນ ແລະ ທາດເຄມີ ໄປກວດສອບຄຸນລັກສະນະໃຫ້ສອດຄ່ອງຕາມມາດຕະຖານແຫ່ງຊາດ, ພາກພື້ນ ແລະ ສາກົນ;
3. ອອກໃບຢັ້ງຢືນຄຸນລັກສະນະທາດລະລາຍປະເພດໄຮໂດຣຄາບອນ ແລະ ທາດເຄມີ ທີ່ນຳເຂົ້າ ແລະ ສົ່ງອອກ;
4. ໜີບກົ່ວຝາປິດເປີດຖັງ ແລະ ທໍ່ປິດເປີດວາວຖັງຢູ່ລົດບັນທຸກທາດລະລາຍປະເພດໄຮໂດຣຄາບອນ ແລະ ທາດເຄມີ ເພື່ອໃຫ້ຖືກຕ້ອງຕາມລະບຽບການເຕັກນິກ;
5. ເຮັດບົດບັນທຶກ ແລະ ໂຈະຊົ່ວຄາວ ການນຳເຂົ້າ ແລະ ສົ່ງອອກ ທາດລະລາຍປະເພດໄຮໂດຣຄາບອນ ແລະ ທາດເຄມີ ທີ່ບໍ່ສອດຄ່ອງຕາມມາດຕະຖານແຫ່ງຊາດ, ພາກພື້ນ ແລະ ສາກົນ ພ້ອມທັງລາຍງານໃຫ້ກົມມາດຕະຖານ ແລະ ວັດແທກ ແລະ ພາກສ່ວນກ່ຽວຂ້ອງ ເພື່ອຮັບຊາບ ແລະ ພິຈາລະນາແກ້ໄຂ;
7. ແຈ້ງສະພາບການ, ເຫດການ ຫຼື ຂະບວນການຕ່າງໆ ທີ່ພົວພັນຄຸນລັກສະນະທາດລະລາຍປະເພດໄຮໂດຣຄາບອນ ແລະ ທາດເຄມີ ທີ່ບໍ່ສອດຄ່ອງຕາມມາດຕະຖານແຫ່ງຊາດ, ພາກພື້ນ ແລະ ສາກົນ ໃຫ້ກົມມາດຕະຖານ ແລະ ວັດແທກ ແລະ ພາກສ່ວນກ່ຽວຂ້ອງຮັບຊາບ;
8. ປັບໃໝ ແລະ ນຳໃຊ້ມາດຕະການຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານມາດຕະຖານ ຕາມການມອບໝາຍ;
9. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານກວດສອບ ແລະ ຢັ້ງຢືນຄຸນລັກສະນະທາດລະລາຍປະເພດໄຮໂດຣຄາບອນ ແລະ ທາດເຄມີ ໃຫ້ກົມມາດຕະຖານ ແລະ ວັດແທກ ແລະ ພາກສ່ວນກ່ຽວຂ້ອງ ປະຈຳວັນ, ອາທິດ, ເດືອນ ແລະ ປີ;
10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 8
## ບົດບັນຍັດສຸດທ້າຍ

**ມາດຕາ 21 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມມາດຕະຖານ ແລະ ວັດແທກ ເປັນເຈົ້າການປະສານສົມທົບກັບ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ, ຂະແໜງກວດສອບຄຸນນະພາບຜະລິດຕະພັນ-ສິນຄ້າ ປະຈຳດ່ານເຂົ້າ-ອອກ ແລະ ພາກສ່ວນກ່ຽວຂ້ອງ ເພື່ອເຜີຍແຜ່ແນະນຳ ແລະ ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

**ມາດຕາ 22 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດພາຍຫຼັງລົງລາຍເຊັນ ສີ່ສິບຫ້າວັນ ແລະ ໄດ້ລົງໃນຈົດໝາຍເຫດທາງລັດຖະການ ນ.

**ລັດຖະມົນຕີ**

ມະໄລທອງ ກົມມະສິດ